ສົນທິສັນຍາມິດຕະພາບ ແລະການຮ່ວມມື

ລະຫວ່າງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກັບ

ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

----

ປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະປະເທດສາທາລະນະລັດ ສັງຄົມນິຍົມ ຫວຽດນາມ,

ຮັບຮູ້ຢ່າງເລິກເຊິ່ງວ່າ ສາຍພົວພັນແບບພິເສດ ລະຫວ່າງລາວ–ຫວຽດນາມ, ຄວາມສາມັກຄີແບບສູ້ຮົບ ແລະໄມຕີຈິດມິດຕະພາບອັນບໍ່ມີສິ່ງໃດສົມສະເໝືອນໄດ້ ລະຫວ່າງປະຊາຊົນລາວ ກັບປະຊາຊົນຫວຽດນາມ, ນ້ຳໃຈແຫ່ງຄວາມເປັນສະຫາຍອັນຍິ່ງໃຫຍ່ ລະຫວ່າງພັກປະຊາຊົນປະຕິວັດ ລາວ ກັບ ພັກກອມມູນິດຫວຽດນາມ ທີ່ໄດ້ຮັບການຫລໍ່ຫລອມມາເປັນເວລາຫລາຍສິບປີໃນການຮ່ວມທຸກຮ່ວມສຸກນຳກັນ, ພ້ອມກັນສູ້ຮົບ, ພ້ອມກັນເອົາຊະນະສັດຕູຮຸກຮານ, ໃນການຮ່ວມມື ແລະການຊ່ວຍເຫລືອເຊິ່ງກັນ ແລະກັນສ້າງສາປະເທດຊາດບ້ານເມືອງນັ້ນ ເປັນມູນເຊື້ອອັນປະເສີດເລີດລ້ຳອັນໜຶ່ງ, ເປັນກຳລັງແຮງຊະນະເລີດອັນໜຶ່ງຂອງທັງສອງຊາດ ແລະທັງສອງພັກ, ເປັນພຶດຕິກຳອັນມີຊີວິດຊີວາອັນໜຶ່ງ, ເປັນກົດເກນແຫ່ງການຂະຫຍາຍຕົວອັນໜຶ່ງຂອງການປະຕິວັດລາວ ແລະຂອງການປະຕິວັດຫວຽດນາມ.

ຖືວ່າ ການເພີ່ມທະວີຄວາມສາມັກຄີອັນສະໜິດແໜ້ນ ແລະການພົວພັນຮ່ວມມືຢ່າງຍາວນານໃນທຸກດ້ານ ລະຫວ່າງລາວ ກັບ ຫວຽດນາມນັ້ນ ເປັນການຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າ ແລະຜົນປະໂຫຍດແຫ່ງການຢືນຢົງຄົງຕົວຂອງປະຊາຊົນແຕ່ລະປະເທດໃນພາລະກິດປົກປັກຮັກສາເອກະລາດແຫ່ງຊາດ ແລະກໍ່ສ້າງລະບອບສັງຄົມນິຍົມ, ສອດຄ່ອງກັບຜົນປະໂຫຍດແຫ່ງຄວາມເປັນເອກະລາດແຫ່ງຊາດ, ປະຊາທິປະໄຕ, ສັນຕິພາບ, ຄວາມເປັນກາງຢ່າງແທ້ຈິງຂອງປະຊາຊົນບັນດາປະເທດໃນອາຊີອາຄະເນ, ສອດຄ່ອງກັບຜົນປະໂຫຍດຂອງປະຊາຊົນທົ່ວໂລກ ທີ່ພວມຕໍ່ສູ້

.../໒

ຕ້ານລັດທິຈັກກະພັດ, ຕ້ານລັດທິລ່າເມືອງຂຶ້ນແບບເກົ່າ ແລະແບບໃໝ່, ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະຄວາມກ້າວໜ້າທາງສັງຄົມ.

ໂດຍຈົງຮັກພັກດີຕໍ່ລັດທິມາກ-ເລນິນ, ສືບຕໍ່ເຊີດຊູຄົມທຸງເອກະລາດແຫ່ງຊາດ ແລະສັງຄົມນິຍົມ, ສົມທົບ ລະຫວ່າງລັດທິຮັກຊາດອັນແທ້ຈິງ ກັບລັດທິສາກົນກຳມາຊີບຢ່າງເປັນເນື້ອດຽວ, ອອກແຮງປົກປັກຮັກສາ ແລະຂະຫຍາຍສາຍພົວພັນແບບພິເສດລະຫວ່າງລາວ-ຫວຽດນາມ, ເຮັດໃຫ້ປະເທດທັງສອງທີ່ເຄີຍໄດ້ມີການຜູກພັນກັນໃນພາລະກິດປົດປ່ອຍຊາດມາແລ້ວນັ້ນ ຈະຜູກພັນກັນແໜ້ນເຂົ້າຕື່ມໃນກິດຈະການກໍ່ສ້າງ ແລະປົກປັກຮັກສາປະເທດຊາດບ້ານເມືອງ ຕະຫລອດກາລະນານ.

ໂດຍເປັນເອກະສັນກັນວ່າ ແນວທາງເອກະລາດ, ເປັນເຈົ້າຕົນເອງ ແລະການນຳອັນຖືກຕ້ອງຂອງພັກປະຊາຊົນປະຕິວັດລາວ ແລະຂອງພັກກອມມູນິດຫວຽດນາມ, ມູນເຊື້ອສາມັກຄີອັນດູດດື່ມລະຫວ່າງທັງສອງຊາດ, ໄຊຊະນະອັນຄົບຖ້ວນຂອງປະເທດທັງສອງໃນພາລະກິດຕ້ານຈັກກະພັດຜູ້ຮຸກຮານ, ຈຸດໝາຍຂອງປະຊາຊົນປະເທດທັງສອງຕ່າງກໍ່ສູ້ຊົນ ເພື່ອລັດທິສັງຄົມນິຍົມນັ້ນເປັນບັນດາຂໍ້ພື້ນຖານເພື່ອຂະຫຍາຍສາຍພົວພັນແບບພິເສດລະຫວ່າງລາວ-ຫວຽດນາມ,

ບົນຈິດໃຈຂອງຖະແຫລງການຮ່ວມລາວ-ຫວຽດນາມ ວັນທີ່ ໑໑ ເດືອນ ໒ ປີ ໑໙໗໗,

ໂດຍແນໃສ່ຈຸດປະສົງເພີ້ມທະວີຄວາມສາມັກຄີ, ການຮ່ວມມືກັນຍາວນານ ແລະຊ່ວຍເຫລືອເຊິ່ງກັນ ແລະກັນໃນພາລະກິດກໍ່ສ້າງ ແລະປົກປັກຮັກສາປະເທດຊາດບ້ານເມືອງ, ເພື່ອຄວາມເປັນເອກະລາດ ແລະວັດທະນາຖາວອນຂອງແຕ່ລະປະເທດ, ປະກອບສ່ວນເຂົ້າໃນການປົກປັກຮັກສາແລະປົກປ້ອງສັນຕິພາບຢູ່ໃນອາຊີອາຄະເນ ແລະໃນໂລກ.

ໄດ້ຕົກລົງເຊັນສົນທິສັນຍາສະບັບນີ້ ແລະໄດ້ຕົກລົງກັນກ່ຽວກັບບັນດາຂໍ້ຄວາມດັ່ງລຸ່ມນີ້ :

## ມາດຕາ ໑

ສອງຝ່າຍໃຫ້ຄຳໝັ້ນສັນຍາວ່າ ຈະອອກແຮງປົກປັກຮັກສາ ແລະຂະຫຍາຍສາຍພົວພັນແບບພິເສດລະຫວ່າງລາວ-ຫວຽດນາມ, ບໍ່ລົດລະໃນການເພີ້ມທະວີຄວາມສາມັກຄີ ແລະຄວາມເຊື່ອຖືເຊິ່ງກັນ ແລະກັນ, ການຮ່ວມມືກັນຢ່າງຍາວນານ ແລະການຊ່ວຍເຫລືອເຊິ່ງກັນ ແລະກັນ ໃນທຸກດ້ານ

.../ມີ

ບົນຈິດໃຈແຫ່ງລັດທິສາກົນກຳມາຊີບ ແລະຕາມຫລັກການສະເໝີພາບຢ່າງສົມບູນ, ເຄົາລົບເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງກັນ, ເຄົາລົບຜົນປະໂຫຍດອັນຊອບທຳຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ.

ແຕ່ລະຝ່າຍ ອອກແຮງອົບຮົມສຶກສາທົ່ວພັກ, ທົ່ວປວງຊົນຂອງຕົນໃຫ້ແພງຖະໜອມ, ປົກປັກຮັກສາ ແລະເສີມສ້າງສາຍພົວພັນແບບພິເສດລະຫວ່າງລາວ-ຫວຽດນາມ ໃຫ້ຜ່ອງໃສ ແລະໝັ້ນຄົງຄະນົງແກ່ນຕະຫລອດກາລະນານ.

## ມາດຕາ ໔

ບົນຫລັກການທີ່ວ່າ ການປົກປັກຮັກສາຄວາມເປັນເອກະລາດແຫ່ງຊາດ ແລະຮັກສາຄວາມສະຫງົບສຸກຂອງປະເທດຊາດນັ້ນ ແມ່ນພາລະກິດຂອງປະຊາຊົນແລະປະເທດ, ສອງຝ່າຍໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຄວາມສະໜັບສະໜູນ ແລະການຊ່ວຍເຫລືອເຊິ່ງກັນ ແລະກັນຢ່າງສຸດອົກສຸດໃຈ, ຮ່ວມມືກັນຢ່າງແໜ້ນແຟ້ນ ເພື່ອແນໃສ່ເພີ່ມທະວີຄວາມອາດສາມາດໃນການປ້ອງກັນ, ໃນການປົກປັກຮັກສາຄວາມເປັນເອກະລາດ; ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນ, ຮັກສາກິດຈະການອອກແຮງງານໃນສັນຕິພາບຂອງປະຊາຊົນ, ຕ້ານທຸກເລກົນ ແລະການກະທຳອັນເປັນການທຳລາຍຂອງຈັກກະພັດ ແລະກຳລັງປະຕິການນອກປະເທດ.

## ມາດຕາ ໕

ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ກັນ, ຊ່ວຍເຫລືອກັນຜ່ານຜ່າຄວາມຫຍຸ້ງຍາກ, ເສີມຂະຫຍາຍເຫື່ອງາພະລັງທາງດ້ານວັດຖຸຂອງແຕ່ລະປະເທດໃຫ້ມີປະສິດທິພາບຢ່າງສູງສຸດ ເພື່ອແນໃສ່ກໍ່ສ້າງປະເທດຊາດບ້ານເມືອງໃຫ້ຮັ່ງມີເຂັ້ມແຂງ, ກໍ່ສ້າງຊີວິດການເປັນຢູ່ອັນອຸ່ມພ່ຳສຳລານ, ສົມບູນພູນສຸກນັ້ນ, ສອງຝ່າຍຈະເພີ່ມທະວີການພົວພັນຮ່ວມມືກັນແບບສັງຄົມນິຍົມ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດກ່ຽວກັບດ້ານການກະສິກຳ, ການປ່າໄມ້, ອຸດສາຫະກຳ, ການຄົມນາຄົມຂົນສົ່ງ, ການຂຸດຄົ້ນຊັບພະຍາກອນທຳມະຊາດ ແລະບັນດາຂົງເຂດເສດຖະກິດອື່ນໆ; ຊ່ວຍເຫລືອກັນທາງດ້ານເສດຖະກິດ ແລະວິທະຍາການຢ່າງສຸດອົກສຸດໃຈ; ຊ່ວຍເຫລືອກັນໃນການກໍ່ສ້າງ ພະນັກງານ; ແລກປ່ຽນຜູ້ຊ່ຽວຊານບັນດາຂະແໜງການເສດຖະກິດ, ວັດທະນະທຳ ແລະວິທະຍາສາດ, ວິທະຍາການ; ເປີດກວ້າງການພົວພັນການຄ້ານຳກັນດ້ວຍຄວາມເອົາໃຈໃສ່ເປັນພິເສດ.

.../໔

ສອງຝ່າຍເຫັນດີເປີດກວ້າງການແລກປ່ຽນວິທະຍາສາດ, ວິທະຍາການ, ການຮ່ວມມືກັນທາງດ້ານວັດທະນະທຳ, ສິລະປະ, ການສຶກສາ, ສາທາລະນະສຸກ, ຂ່າວສານ, ໜັງສືພິມ, ວິທະຍຸກະຈາຍສຽງ, ຮູບເງົາ, ກິລາກາຍຍະກຳ ແລະບັນດາຂົງເຂດວັດທະນະທຳອື່ນໆ.

ສອງຝ່າຍຈະເພີ້ມທະວີບັນດາການພົບປະກັນ ລະຫວ່າງຂະແໜງການຕ່າງໆ ທີ່ມີສ່ວນກ່ຽວພັນຂອງປະເທດທັງສອງ ເພື່ອພ້ອມກັນເປິກສາຫາລືການປະຕິບັດບັນດາແຜນການຮ່ວມມືກັນໃຫ້ປະກົດເປັນຈິງ. ແລກປ່ຽນບົດຮຽນຕ່າງໆ ກ່ຽວກັບການກໍ່ສ້າງເສດຖະກິດ ແລະການຂະຫຍາຍວັດທະນະທຳ.

<u>ມາດຕາ ໔</u>

ສອງຝ່າຍ ຢືນຢັນ ເຖິງຄວາມຕັດສິນໃຈກໍ່ສ້າງຊາຍແດນລາວ-ຫວຽດນາມ ເປັນຊາຍແດນມິດຕະພາບຖານອ້າຍນ້ອງອັນຍາວນານ ລະຫວ່າງປະເທດທັງສອງ ບົນພື້ນຖານແຫ່ງສົນທິສັນຍາກຳນົດເສັ້ນຊາຍແດນປະເທດລະຫວ່າງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບ ສາທາລະນະລັດສັງຄົມນິຍົມຫວຽດນາມ ທີ່ໄດ້ລົງນາມ ເມື່ອວັນທີ່ ໑໘ ເດືອນ ໗ ປີ ໑໙໗໗.

<u>ມາດຕາ ໕</u>

ສອງຝ່າຍເຄົາລົບ ແລະສະໜັບສະໜູນຢ່າງສົມບູນ ຕໍ່ແນວທາງສາກົນທີ່ເປັນເອກະລາດ, ເປັນເຈົ້າຕົນເອງຂອງກັນ.

ສອງຝ່າຍຈະອອກແຮງເພີ້ມທະວີຄວາມສາມັກຄີແບບສູ້ຮົບ ແລະການພົວພັນຮ່ວມມືກັນກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ; ຕັ້ງໜ້າປະກອບສ່ວນຂອງຕົນພ້ອມກັບບັນດາປະເທດສັງຄົມນິຍົມ, ກັບຂະບວນການກອມມູນິດສາກົນ, ເພີ້ມທະວີຄວາມສາມັກຄີ, ສະໜັບສະໜູນ ແລະຊ່ວຍເຫລືອເຊິ່ງກັນແລະກັນ, ບົນພື້ນຖານລັດທິມາກ-ເລນິນ ແລະລັດທິສາກົນກຳມາຊີບ; ເພີ້ມທະວີຄວາມສາມັກຄີແບບສູ້ຮົບ, ການຮ່ວມກັນຢ່າງຍາວນານ ແລະການຊ່ວຍເຫລືອເຊິ່ງກັນ ແລະກັນກັບປະເທດກຳປູເຈຍອ້າຍນ້ອງ ຢ່າງບໍ່ຢຸດຢັ້ງຕາມຫລັກການສະເໝີພາບຢ່າງສົມບູນ, ເຄົາລົບຄວາມເປັນເອກະລາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ ເຄົາລົບຜົນປະໂຫຍດອັນຊອບທຳຂອງກັນ, ບໍ່ແຊກແຊງເຂົ້າ-

ພື້ນແຜ່ນດິນອັນຄົບຖ້ວນຂອງກັນ ເຄົາລົບຜົນປະໂຫຍດອັນຊອບທຳຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະໜັບສະໜູນພາລະກິດຕໍ່ສູ້ຂອງປະຊາຊົນບັນດາປະເທດໃນອາຊີອາຄະເນ ເພື່ອເອກະລາດແຫ່ງຊາດ, ປະຊາທິປະໄຕ, ສັນຕິພາບ ແລະຄວາມເປັນກາງຢ່າງແທ້ຈິງ, ສະຖາປະນາ ແລະຂະຫຍາຍການພົວພັນມິດຕະພາບ ແລະການຮ່ວມມືກັບບັນດາປະເທດໃນພາກພື້ນນີ້ ບົນພື້ນຖານເຄົາລົບຄວາມເປັນເອກະລາດ, ອະທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ຮຸກຮານກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະຕ່າງຝ່າຍຕ່າງມີຜົນປະໂຫຍດ, ພ້ອມກັນຄົງຕົວຢູ່ໂດຍສັນຕິ, ສະໜັບສະໜູນການຕໍ່ສູ້ຂອງປະຊາຊົນບັນດາປະເທດອາຊີ, ອາຟີລິກາ, ອາເມລິກາລາຕິນຕ້ານລັດທິຈັກກະພັດ, ຕ້ານລັດທິລ່າເມືອງຂຶ້ນແບບເກົ່າ ແລະແບບໃໝ່; ຕ້ານລັດທິຈຳແນກເຊື້ອຊາດ, ເພື່ອຄວາມເປັນເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະຄວາມກ້າວໜ້າທາງສັງຄົມ; ສະໜັບສະໜູນການຕໍ່ສູ້ຂອງຊົນຊັ້ນກຳມະກອນ ແລະປະຊາຊົນຜູ້ອອກແຮງງານໃນບັນດາປະເທດທຶນນິຍົມ ເພື່ອຍາດເອົາສິດດຳລົງຊີວິດ, ປະຊາທິປະໄຕ ແລະຄວາມກ້າວໜ້າທາງສັງຄົມ; ໃຫ້ຄວາມພາງູພ້ອມວ່າ ຈະເຮັດທຸກສິ່ງທຸກຢ່າງຈົນສຸດກຳລັງຂອງຕົນ ເພື່ອເນ່ໃສ່ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ລວມຂອງປະຊາຊົນໃນໂລກ, ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະສັງຄົມນິຍົມ.

## ມາດຕາ ໖

ສອງຝ່າຍຈະດຳເນີນການແລກປ່ຽນຄວາມຄິດຄວາມເຫັນກັນຢ່າງສະໝ່ຳສະເໝີ ກ່ຽວກັບບັນຫາຕ່າງໆ ທີ່ກ່ຽວພັນເຖິງການພົວພັນລະຫວ່າງປະເທດທັງສອງ ແລະບັນຫາສາກົນຕ່າງໆ ທີ່ທັງສອງຝ່າຍຕ່າງມີຄວາມສົນໃຈ ດ້ວຍການພົບປະກັນລະຫວ່າງບັນດາຜູ້ນຳຂອງພັກ, ຂອງລັດ, ດ້ວຍການໄປຢ້ຽມຢາມຂອງບັນດາຄະນະຜູ້ແທນເປັນທາງການ ແລະບັນດາຜູ້ຕາງໜ້າພິເສດ ຫລືໂດຍຜ່ານເສັ້ນທາງການທູດ. ສອງຝ່າຍຈະສົ່ງເສີມການເປີດກ້ວາງການພົວພັນລະຫວ່າງ ບັນດາອົງການຈັດຕັ້ງມະຫາຊົນຂອງປະເທດທັງສອງ.

ທຸກບັນຫາທີ່ກ່ຽວພັນເຖິງສາຍພົວພັນລະຫວ່າງປະເທດທັງສອງຈະໄດ້ຮັບການ ແກ້ໄຂໂດຍການເຈລະຈາກັນດ້ວຍຈິດໃຈແຫ່ງຄວາມເຂົ້າໃຈກັນ ແລະເຄົາລົບເຊິ່ງກັນ ແລະກັນ, ມີເຫດຜົນທັງເໝີນເທົ່າກັນ.

ສົນທິສັນຍາສະບັບນີ້ ຈະໄດ້ຮັບການໃຫ້ສັດຕະຍາບັນ ແລະມີຜົນສັກສິດນັບແຕ່ມື້ແລກປ່ຽນສານສັດຕະຍາບັນເປັນຕົ້ນໄປ. ການແລກປ່ຽນສານສັດຕະຍາບັນຈະໄດ້ດຳເນີນຢູ່ທີ່ ຮ່າໂນ້ຍ ນະຄອນຫລວງແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໃນເວລາອັນໄວທີ່ສຸດເທົ່າທີ່ຈະໄວໄດ້.

ສົນທິສັນຍາສະບັບນີ້ ມີຄຸນຄ່າໃນໄລຍະເວລາຊາວຫ້າປີ ແລະຈະໄດ້ຕໍ່ອາຍຸໄປໃນຕົວມັນເອງເທື່ອລະສິບປີ, ຖ້າວ່າຝ່າຍໜຶ່ງຂອງພາຄີຄູ່ສັນຍາບໍ່ແຈ້ງ ຄວາມປະສົງຢາກລົບລ້າງສົນທິສັນຍາ ສະບັບນີ້ ໃຫ້ອີກຝ່າຍໜຶ່ງຊາບລ່ວງໜ້າດ້ວຍລາຍລັກອັກສອນ ຢ່າງໜ້ອຍ ປີໜຶ່ງກ່ອນທີ່ສົນທິສັນຍາ ຈະສິ້ນກຳນົດ.

ສົນທິສັນຍາສະບັບນີ້ ເຮັດທີ່ ວຽງຈັນ, ນະຄອນຫລວງແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ວັນທີ່ ໑໘ ເດືອນ ໗ ປີ ໑໙໗໗, ເປັນສອງສະບັບ ພາສາລາວ ແລະພາສາຫວຽດນາມ ທັງສອງສະບັບລາວ ແລະຫວຽດນາມ ລ້ວນແຕ່ມີຄຸນຄ່າເທົ່າກັນ.

ຕາງໜ້າ
ສາທາລະນະລັດ
ປະຊາທິປະໄຕປະຊາຊົນລາວ

ຕາງໜ້າ
ສາທາລະນະລັດ
ສັງຄົມນິຍົມ ຫວຽດນາມ

ໄກສອນ ພົມວິຫານ
ນາຍົກລັດຖະມົນຕີ

ຝ້າມ ວັນ ດົງ
ນາຍົກລັດຖະມົນຕີ